# ຖະແຫຼງການວຽງຈັນວ່າດ້ວຍ ຄູ່ຮ່ວມມື ເພື່ອການຮ່ວມມືໃນການພັດທະນາທີ່ມີ ປະສິດທິຜົນ (2026-2035)

# ເນື້ອໃນນຳສະເໜີ

I. ສັງລວມຄວາມເປັນມາ

II. ຫິກຫຼັກການອັນເປັນພື້ນຖານ ແລະ ຂອບໜ້າວຽກຕົ້ນຕໍຕ່າງໆ

# I. ສັງລວມຄວາມເປັນມາ

14th High-Level
Round Table Meeting
Vientiane Capital

................

# ການເປັນຄູ່ຮ່ວມພັດທະນາໃນໄລຍະ 2 ທົດສະວັດທີ່ຜ່ານມາ

## ຖະແຫຼງການວຽງຈັນ I (2006-2015)

**ປະສິດທິພາບຂອງການຊ່ວຍເຫຼືອ**

- ຄວາມເປັນເຈົ້າການຂອງປະເທດໃນລະດັບພື້ນຖານ
- ການປະສານງານເບື້ອງຕົ້ນ
- ການລິເລີ່ມສ້າງຂັ້ນພື້ນຖານ

## ຖະແຫຼງການວຽງຈັນ II (2016-2025)

**ຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ**

- ສົ່ງເສີມການມີສ່ວນຮ່ວມຂອງຫຼາຍພາກສ່ວນ
- ປັບປຸງຄວາມສອດຄ່ອງ
- ການເຮັດວຽກຮ່ວມກັນຂອງຂະແໜງການ

## ຖະແຫຼງການວຽງຈັນ III (2026-2035)

**ການເຊື່ອມໂຍງດ້ານການເງິນ**

- ຄຸ້ມຄອງການຫຼຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ
- ເຊື່ອມໂຍງວຽກງານການເງິນເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ
- ຄູ່ຮ່ວມພັດທະນາທີ່ຫຼາກຫຼາຍ

# ຜົນການທົບທວນທີ່ພົ້ນເດັ່ນ ໃນໄລຍະຜ່ານມ

1

## ທົບທວນຄືນການຮ່ວມມືເພື່ອ ການພັດທະນາທີ່ມີປະສິດທິ ຜົນໃນລະດັບສາກົນ 2024

ບາງຄຳແນະນຳຕົ້ນຕໍທີ່ພົ້ນເດັ່ນ ເຊັ່ນ : ສົ່ງເສີມການມີສ່ວນຮ່ວມຂອງຫຼາຍພາກສ່ວນ, ສົ່ງເສີມຄວາມເຂັ້ມແຂງວຽກງານກວດກາຂອງສະພາແຫ່ງຊາດ, ປັບປຸງວຽກງານການວາງແຜນແຫ່ງຊາດ ແລະ ສົ່ງເສີມສິ່ງແວດລ້ອມທີ່ດີ ສໍາລັບອົງການຈັດຕັ້ງທາງສັງຄົມ.

2

## ການທົບທວນແຜນດຳເນີນງ ຖະແຫຼງການວຽງຈັນຄັ້ງສຸດທ ປີ 2024

ການຈັດຕັ້ງປະຕິບັດແຜນເພື່ອການພັດທະນາ ແລະ ຄວາມຮັບຜິດຊອບຮ່ວມກັນມີຄວາມຄືບໜ້າດີຂຶ້ນ ແຕ່ຍັງມີສິ່ງທ້າທາຍໃນການຄາດຄະເນການສະໜອງທຶນ, ການມີສ່ວນຮ່ວມຂອງທຸກພາກ ສ່ວນທີ່ກ່ຽວຂ້ອງ ແລະ ນຳໃຊ້ລະບົບການຄຸ້ມຄອງການເງິນພາກລັດ.

3

## ຂະບວນການໂຕະມົນ

ເປັນເວທີໜຶ່ງ ເພື່ອສົ່ງເສີມການປຶກສາຫາລື ລະຫວ່າງ ພາກລັດ ແລະຄູ່ຮ່ວມພັດທະນາໂດຍຜ່ານໜ່ວຍງານຂະແໜງການ ເຮັດໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງສາມາດຮ່ວມກັນແກ້ໄຂສິ່ງທ້າທາຍຕ່າງໆໃນວຽກງານການພັດທະນາ.

# ການປ່ຽນແປງຂອງດິນຟ້າອາກາດ ແລະ ຄວາມຍືນຍົງຂອງສິ່ງແວດລ້ອມ

ວາລະແຫ່ງຊາດເພື່ອການພັດທະນາ

ສປປ ລາວ ເປັນປະເທດທີ່ອຸດົມຮັ່ງມີໄປດ້ວຍຊັບພະຍາກອນທຳມະຊາດເຊິ່ງມີຄວາມສ່ຽງ ທີ່ຈະໄດ້ຮັບຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດ ຈຶ່ງມີຄວາມຈຳເປັນໃນການສົ່ງເສີມວຽກງານການປັບໂຕຕໍ່ສະພາບການປ່ຽນແປງນັ້ນ ແລະ ສົ່ງເສີມການເຕີບໂຕສີຂຽວ.

ການຄຸ້ມຄອງຊັບພະຍາກອນປ່າໄມ້ ແລະ ແຫຼ່ງນ້ຳໃຫ້ມີຄວາມຍືນຍົງ ແມ່ນມີຄວາມຈຳເປັນເພື່ອປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາເສດຖະກິດ.

## ບັນດາບູລິມະສິດເພື່ອການຫັນປ່ຽນທາງດ້ານເສດຖະກິດ

### ການສຶກສາ ແລະ ທັກສະຕ່າງໆ

ສົ່ງເສີມການຝຶກອົບຮົມວິຊາຊີບ, ການສຶກສາຊັ້ນສູງ, ຫັນການຮຽນຮູ້ເປັນດີຈີຕອນ ເພື່ອຫຼຸດຜ່ອນການໄປອອກແຮງງານຢູ່ຕ່າງປະເທດຂອງຊາວໜຸ່ມ.

### ເສດຖະກິດດີຈີຕອນ

ການນຳໃຊ້ນະວັດຕະກຳອັນໃໝ່ ແລະ ການຫັນເປັນດີຈີຕອນ ຈະຊ່ວຍໃຫ້ການເຮັດວຽກຂອງບັນດາຂະແໜງການມີປະສິດທິຜົນຍິ່ງຂຶ້ນ.

### ການພັດທະນາພາກເອກະຊົນ

ເສີມສ້າງຄວາມເຂັ້ມແຂງໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນວຽກທີ່ສຳຄັນໃນການສ້າງວຽກເຮັດງານທຳ ແລະ ຊຸກຍູ້ການເຕີບໂຕຂອງເສດຖະກິດ.

### ການເຊື່ອມໂຍງໃນລະດັບພາກພື້ນ

ເພີ່ມທະວີການເຊື່ອມໂຍງການຮ່ວມມືກັບບັນດາປະເທດໃນອາຊຽນ ຈະຊ່ວຍສ້າງໂອກາດທາງດ້ານການຄ້າ ແລະ ການແລກປ່ຽນຄວາມຮູ້.

# ການພັດທະນາສັງຄົມເປັນວຽກທີ່ສຳຄັນຕົ້ນຕໍ

**ການລົງທຶນໃສ່ການພັດທະນາຊັບພະຍາກອນມະນຸດ**

ການສຶກສາ ແລະ ການເບິ່ງແຍງສຸຂະພາບ ແມ່ນມີຄວາມສຳຄັນຕໍ່ການສ້າງທັກສະໃນການເຮັດວຽກເພື່ອສາມາດຂັບເຄື່ອນເສດຖະກິດໃຫ້ມີການຂະຫຍາຍຕົວ.

**ສິດທິສະເໝີພາບທີ່ເທົ່າທຽມກັນ**

ການປັບປຸງລະບົບການເບິ່ງແຍງສຸຂະພາບ, ການສຶກສາ ແລະ ການປົກປ້ອງສັງຄົມເພື່ອຮັບປະກັນໃຫ້ການພັດທະນາແບບຮອບດ້ານ ແລະ ການປົກປ້ອງປະຊາກອນທີ່ດ້ອຍໂອກາດ.

**ຄວາມສະເໝີພາບ ແລະ ການຈ້າງງານ**

ຄວາມສະເໝີພາບ ລະຫວ່າງ ຍິງ - ຊາຍ ແລະ ການຈ້າງງານຂອງໄວໜຸ່ມ ແມ່ນມີຄວາມສຳຄັນໃນການສ້າງສັງຄົມທີ່ສະເໝີພາບ ແລະ ຈະເລີນຮຸ່ງເຮືອງ.

**ການຫຼຸດຜ່ອນຄວາມທຸກຍາກ**

ເອົາໃຈໃສ່ແກ້ໄຂບັນຫາຄວາມບໍ່ສະເໝີພາບ ໂດຍສະເພາະໃນສະພາບທີ່ ສປປ ລາວ ກະກຽມຫຼຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ ແລະ ເພື່ອຮັບປະກັນວ່າ ຈະບໍ່ປ່ອຍປະໃຜຢູ່ເບື້ອງຫຼັງ.

# ຮູບແບບການເຊື່ອມໂຍງທາງດ້ານການເງິນ



### ການເງິນພາກລັດຢູ່ພາຍໃນປະເທດ

ສົ່ງເສີມການບໍລິຫານວຽກງານສ່ວຍສາອາກອນ ແລະ ການລະດົມທຶນຢູ່ພາຍໃນປະເທດ

### ການເງິນພາກລັດໃນລະດັບສາກົນ

ການຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ) ຈາກຄູ່ຮ່ວມພັດທະນາສອງຝ່າຍ ແລະ ຫຼາຍຝ່າຍ

### ການເງິນພາກເອກະຊົນໃນລະດັບສາກົນ

ການລົງທຶນຈາກຕ່າງປະເທດ (FDI) ແລະ ການຮ່ວມມື ລະຫວ່າງ ພາກລັດ ແລະ ເອກະຊົນ

### ການເງິນພາກເອກະຊົນຢູ່ພາຍໃນປະເທດ

ການພັດທະນາພາກເອກະຊົນ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ

ເຊື່ອມສານຍຸດທະສາດການເງິນເຂົ້າກັບແຜນພັດທະນາເສດຖະກິດ - ສັງຄົມຄັ້ງທີ 9 ແລະ ຄັ້ງທີ 10 ໃນໄລຍະປີ (2021 - 2030) ເປັນວິທີພື້ນຖານເພື່ອເຊື່ອມໂຍງວຽກງານການເງິນເຂົ້າກັບເປົ້າໝາຍການພັດທະນາ.

# II. ຫິກຫຼັກການພື້ນຖານ ຂອບໜ້າວຽກຕົ້ນຕໍຕ່າງໆ

# ຫຼັກການທີ່ 1 : ຄວາມເປັນເຈົ້າການ ແລະຄວາມເປັນຜູ້ນຳຢູ່ພາຍ

## ຂອບໜ້າວຽກຕົ້ນຕໍຕ່າງໆ

**ການລະດົມລາຍຮັບພາຍໃນປະເທດ**

ເສີມສ້າງຄວາມເຂັ້ມແຂງໃຫ້ວຽກບໍລິຫານສ່ວຍສາອາກອນ ແລະຄວາມອາດສາມາດໃນການຄຸ້ມຄອງການລົງທຶນພາກລັດ.

**ຂອບການເຊື່ອມສານການເງິນ**

ການຄຸ້ມຄອງການເງິນຈາກຫຼາຍແຫຼ່ງທຶນ: ຊກພ, ເງິນຈາກພາກເອກະຊົນພາຍໃນປະເທດ ແລະການລົງທຶນໃນລະດັບສາກົນ.

**ການປົກຄອງທ້ອງຖິ່ນ**

ເສີມຂະຫຍາຍການໃຫ້ບໍລິການ ແລະກົນໄກການປະສານງານ ລະຫວ່າງຂະແໜງການ.

- ການຫັນປ່ຽນຈາກຄວາມເປັນເຈົ້າການໃນລະດັບພື້ນຖານ ສູ່ການຍົກລະດັບລະບົບຄຸ້ມຄອງການເງິນພາກລັດ, ການເຊື່ອມໂຍງວຽກງານການເງິນ ແລະ ການຄຸ້ມຄອງບັນດາສິ່ງທ້າທາຍການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ.

# ຫຼັກການທີ່ 2: ການມີສ່ວນຮ່ວມທີ່ມີຄຸນນະພາບ ແລະ ຫຼາກຫຼາຍຂອງ ຂອບໜ້າວຽກຕົ້ນຕໍຕ່າງໆ

### ການປັບປຸງຂອງການເປັນຄູ່ຮ່ວມພັດທະນາ

ເສີມຂະຫຍາຍຂອບການຮ່ວມມື ແລະ ກ້າວເຂົ້າສູ່ການຮ່ວມມືທີ່ມີຄຸນນະພາບຫຼາຍຂຶ້ນກ່ວາເກົ່າ :

- ສົ່ງເສີມການມີສ່ວນຮ່ວມຂອງພາກເອກະຊົນເຂົ້າໃນບັນດາຂະແໜງການທີ່ເປັນບູລິມະສິດ
- ປັບປຸງສິ່ງແວດລ້ອມໃນການບໍລິຫານຂອງອົງການຈັດຕັ້ງທາງສັງຄົມ
- ສົ່ງເສີມການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືຮູບແບບສາມຫຼ່ຽມ
- ການຮ່ວມມືໃນລະດັບພາກພື້ນ ແລະ ເອົາໃຈໃສ່ບັນຫາຂໍ້ຂັດແຍ່ງຕາມເຂດຊາຍແດນ

100%

### ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາເພື່ອຊ່ວຍການລະດົມທຶນ

ນຳໃຊ້ແຫຼ່ງທຶນຊ່ວຍເຫຼືອທາງການເພື່ອການພັດທະນາທີ່ມີຈຳກັດ ເພື່ອລະດົມທຶນໃນຮູບແບບການເງິນ ປະສົມປະສານກັບການມີສ່ວນຮ່ວມຂອງ ພາກເອກະຊົນ ແລະ ປັບປຸງຂັ້ນຕອນການບໍລິຫານ.

### ການມີສ່ວນຮ່ວມຂອງຫຼາຍພາກສ່ວນ

ພາກລັດ, ພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມພັດທະນາໃນລະດັບພາກພື້ນ

# ຫຼັກການທີ່ 3: ການວາງແຜນທີ່ອີງໃສ່ຜົນໄດ້ຮັບ

## ຂອບໜ້າວຽກຕົ້ນຕໍຕ່າງໆ

01

**ການກຳນົດນະໂຍບາຍໂດຍອີງໃສ່ຂໍ້ມູນຕົວຈິງ**

ການຕັດສິນໃຈຂອງບັນດາສະຖາບັນໃນທຸກໆຂັ້ນຂອງພາກລັດ ແມ່ນຈະອີງໃສ່ຂໍ້ມູນຈາກລະບົບສະຖິຕິແຫ່ງຊາດ.

02

**ເອົາໃຈໃສ່ວິໄຈຂໍ້ມູນ**

ຮັບປະກັນ "ວ່າຈະບໍ່ປ່ອຍປະຜູ້ໃດຢູ່ເບື້ອງຫຼັງ" ໂດຍຜ່ານການຕິດຕາມ ພົນລະເມືອງແບບຮອບດ້ານ ແລະການຕິດຕາມຄວາມບໍ່ສະເໝີພາບ.

03

**ການເຊື່ອມໂຍງວຽກງານການປ່ຽນແປງດິນຟ້າອາກາດ**

ການເຊື່ອມໂຍງສະພາບການປ່ຽນແປງຂອງດິນຟ້າອາກາດເຂົ້າໃສ່ການ ກຳນົດແຜນການຕ່າງໆ ເພື່ອຮັບປະກັນໃຫ້ບັນດາໜ້າວຽກມີຄວາມຄືບ ໜ້າ, ຄວາມທົນທານ ແລະ ການປັບໂຕ.

04

**ຫັນລະບົບຕິດຕາມ ແລະ ປະເມີນຜົນເປັນດີຈີຕອນ**

ນຳໃຊ້ເທັກໂນໂລຍີ ເພື່ອປັບປຸງການເກັບກຳຂໍ້ມູນ, ການວິເຄາະ ແລະ ການເຮັດບົດລາຍງານທີ່ມີຜົນດີຂຶ້ນກ່ວາເກົ່າ.

# ຫຼັກການທີ່ 4: ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບຮ່ວມກັນ

## ຂອບໜ້າວຽກຕົ້ນຕໍຕ່າງໆ

**ການຫັນເປັນດີຈີຕອນ**

ຍົກລະດັບລະບົບການຄຸ້ມຄອງທຶນຊ່ວຍເຫຼືອເພື່ອການພັດທະນາ ໃຫ້ສາມາດບັນທຶກທຸກແຫຼ່ງທຶນ ເພື່ອການພັດທະນາ ເຊັ່ນ : ການເງິນສໍາລັບການປ່ຽນແປງຂອງດິນຟ້າອາກາດ ແລະ ການລົງທຶນພາກເອກະຊົນ.

**ການທົບທວນແບບມີສ່ວນຮ່ວມຈາກຫຼາຍພາກສ່ວນ**

ລະບົບການປະເມີນຜົນຮ່ວມກັນ ທີ່ປະກອບມີພາກລັດ, ບັນດາຄູ່ຮ່ວມພັດທະນາ, ພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ, ຜູ້ໄດ້ຮັບຜົນປະໂຫຍດຕ່າງໆ.

**ເອົາໃຈໃສ່ວຽກງານກວດກາ**

ຮັບປະກັນການມີສ່ວນຮ່ວມຂອງສະພາແຫ່ງຊາດ, ການລາຍງານການເງິນພາກລັດ, ຂອບການຕ້ານສໍ້ລາດບັງຫຼວງ ໂດຍຫັນການຈັດຊື້ - ຈັດຈ້າງເປັນດີຈີຕອນ.

# ຫຼັກການທີ່ 5: ຄວາມອາດສາມາດໃນການຄາດຄະເນ ແລະ ຄວາ

## ຂອບໜ້າວຽກຕົ້ນຕໍຕ່າງໆ

**ຂອບການເງິນໃນໄລຍະກາງ**

ຄວາມສອດຄ່ອງຂອງວຽກງານການເງິນ ກັບຮອບວຽນການວາງແຜນໃນລະດັບຊາດ ແລະ ຍຸດທະສາດຂອງບັນດາຂະແໜງການ.

**ບັນທຶກການຮ່ວມມືເພື່ອການພັດທະນາເຂົ້າໃສ່ງົບປະມານແຫ່ງລັດ**

ສະໜອງຂໍ້ມູນການຮ່ວມມື ເພື່ອການພັດທະນາຢ່າງເປັນປົກກະຕິ ແລະ ການເຊື່ອມສານກັບງົບປະມານ.

**ບັນດາຂັ້ນຕອນຄວນມີຄວາມກົມກຽວກັນ**

ຫຼຸດຜ່ອນຄ່າດຳເນີນງານດ້ວຍການບໍລິຫານທົ່ວໄປ ເຊັ່ນ: ການວາງແຜນ, ການສະໜອງທຶນ ແລະ ການລາຍງານ.

**ນຳໃຊ້ລະບົບການຄຸ້ມຄອງການເງິນພາກລັດ**

ບັນດາຄູ່ຮ່ວມພັດທະນານຳໃຊ້ລະບົບຕ່າງໆພາຍໃນປະເທດ

ເມື່ອລະບົບຕ່າງໆພາຍໃນປະເທດໄດ້ຖືກນຳໃຊ້ ຕ້ອງຮັບປະກັນໃນການຄາດຄະເນໃນໄລຍະກາງ ແລະ ການວາງແຜນລາຍຈ່າຍໃນອານາຄົດ.

# ຫຼັກການທີ່ 6: ການເສີມສ້າງຄວາມອາດສາມາດເພື່ອການພັດທະນາທີ່ຍືນຍົງ ຂອງບໜ້າວຽກຕົ້ນຕໍຕ່າງ

**ການປັບໂຕຂອງບັນດາສະຖາບັນ**

ເສີມສ້າງຄວາມອາດສາມາດໃນການຄຸ້ມຄອງສິ່ງທ້າທາຍທີ່ຊັບຊ້ອນ ເຊັ່ນ: ການປັບໂຕເຂົ້າກັບການປ່ຽນແປງຂອງດິນຟ້າອາກາດໃນທຸກໆຂະແໜງການ ແລະ ທຸກລະດັບຂອງພາກລັດ.

**ຫັນການໃຫ້ການບໍລິການສາທາລະນະເປັນທັນສະໄໝ**

ເສີມຂະຫຍາຍຄວາມອາດສາມາດໃນການຫັນການບໍລິການສາທາລະນະເປັນທັນສະໄໝ ແລະ ປັບປຸງໃຫ້ມີປະສິດທິພາບດ້ວຍເຕັກໂນໂລຊີ.

**ການລົງທຶນພາກລັດໃຫ້ມີປະສິດທິຜົນ**

ຄຸ້ມຄອງທັກສະໃນການພັດທະນາເພື່ອການບູລະນະໃນໄລຍະຍາວ ແລະ ການລົງທຶນຂອງພາກລັດທີ່ມີປະສິດທິຜົນ.

**ການຄຸ້ມຄອງຄວາມຮູ້**

ເກັບຮັກສາຜົນການຄົ້ນຄ້ວາຂອງສະຖາບັນ ໃນຮູບແບບການເກັບເອກະສານຕ່າງໆ, ບັນທຶກໃນລະບົບເກັບຮັກສາເອກະສານທີ່ທັນສະໄໝ ແລະ ລະບົບແບ່ງປັນຄວາມຮູ້.

# ປັບປຸງຂະບວນການໂຕະມົນ
## ຈາກການປຶກສາຫາລືສູ່ການດຳເນີນງານທີ່ເນັ້ນໃສ່ຜົນໄດ້ຮັບທີ່

### ຂະຫຍາຍຂອບການເງິນ
- ແຫຼ່ງ ຊາກພ ແບບດັ້ງເດີມ ແລະ ການຮ່ວມມືດ້ານວິຊາການ
- ຮ່ວມມືແບບໃຕ້ -ໃຕ້ ແລະຮ່ວມມືຮູບແບບສາມຫຼ່ຽມ
- ການມີສ່ວນຮ່ວມຂອງພາກເອກະຊົນ ແລະການລົງທຶນໂດຍກົງຈາກຕ່າງປະເທດ
- ການເງິນທີ່ຕິດພັນກັບການປ່ຽນແປງຂອງດິນຟ້າອາກາດ ແລະ ພັນທະບັດສີຂຽວ
- ລະດົມທຶນພາຍໃນປະເທດ

### ປັບປຸງການປະສານງານ
- ຕິດຕາມການຜົນຂອງການຜັນຂະຫຍາຍຍຸດທະສາດ
- ປຶກສາຫາລືບັນດານະໂຍບາຍໂດຍອີງໃສ່ຂໍ້ມູນຕົວຈິງ
- ເສີມສ້າງຄວາມເຂັ້ມແຂງຂອບວຽກຕິດຕາມ ແລະ ປະເມີນຜົນ
- ຄວາມກົມກຽວຂອງແຕ່ລະຂະແໜງການຕ່າງໆ
- ນຳໃຊ້ຮູບແບບເຕັກໂນໂລຊີຕ່າງໆ

### ສົ່ງເສີມການມີສ່ວນຮ່ວມຕ່າງໆ
- ການມີສ່ວນຮ່ວມຂອງແຕ່ລະພາກສ່ວນແມ່ນມີຄວາມໝາຍ ແລະ ປະສິດທິພາບ
- ຈັດກອງປະຊຸມແບບປະສົມປະສານ
- ປັບປຸງຂັ້ນຕອນການດຳເນີນງານໃຫ້ມີຄວາມວ່ອງໄວ
- ຜັນຂະຫຍາຍນະໂຍບາຍສູ່ແຜນດຳເນີນງານເປັນອັນລະອຽດ
- ການເຂົ້າເຖິງຂ່າວສານ ເພື່ອຮັບປະກັນຄວາມໂປ່ງໃສ

14th High-Level

Round Table Meeting

Vientiane Capital

# ຂອບໃຈ (Thank You)